ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ທ່ານ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຕ້ອນຮັບຄະນະຈາກທະນາຄານໂລກ



ໃນຕອນເຊົ້າຂອງວັນທີ 06 ກໍລະກົດ 2023 ທີ່ຫ້ອງຮັບແຂກຂອງທະນາຄານແຫ່ງ ສປປ ລາວ, ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະກົມພາຍໃນ ທຫລ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ດຣ ເວັມປີ ສາປຸຕຣາ (Dr. Wempi Saputra) ຫົວໜ້າຫ້ອງການກຸ່ມອາຊີຕາເວັນອອກສ່ຽງໃຕ້ ປະຈໍາທະນາຄານໂລກ (Southeast Asia Voting Group-SEAVG) ພ້ອມດ້ວຍຄະນະ.

ຈຸດປະສົງໃນການເຂົ້າຢ້ຽມຂໍ່ານັບໃນຄັ້ງນີ້ ແມ່ນເພື່ອແລກປ່ຽນຄໍາຄິດຄໍາເຫັນກ່ຽວກັບການພັດທະນາເສດຖະກິດ-ສັງຄົມ ແລະ ປຶກສາຫາລື ກ່ຽວກັບບັນຫາ, ສິ່ງທ້າທາຍໃນການຈັດຕັ້ງປະຕິບັດບັນດາໂຄງການ ລວມທັງແຜນຍຸດທະສາດການຮ່ວມມືລະຫວ່າງ ສປປ ລາວ ແລະ ທະນາຄານໂລກ.

 

ທ່ານຮອງຜູ້ວ່າການ ທຫລ ສະແດງຄວາມຍິນດີຕ້ອນຮັບ ທ່ານຫົວໜ້າຫ້ອງການກຸ່ມ ພ້ອມດ້ວຍຄະນະທີ່ມາຢ້ຽມຢາມ ສປປ ລາວ ເພື່ອຮັດແໜ້ນການພົວພັນອັນໃກ້ຊິດ ລະຫວ່າງ ປະເທດສະມາຊິກກັບຫ້ອງການກຸ່ມ ແລະ ສະແດງຄວາມຊົມເຊີຍ ຜົນງານ ແລະ ທຸກຄວາມພະຍາຍາມຂອງກຸ່ມທະນາຄານໂລກ ທີ່ໄດ້ໃຫ້ການຊ່ວຍເຫຼືອຕ່າງໆ ເພື່ອຊ່ວຍເຫຼືອບັນດາປະເທດສະມາຊິກໃນທຸກວິກິດການ ເພື່ອຊຸກຍູ້ການຟື້ນຟູເສດຖະກິດ-ສັງຄົມ ໃນເງື່ອນໄຂທີ່ໂລກມີການປ່ຽນແປງ ແລະ ສິ່ງທ້າທາຍຫຼາຍຢ່າງ.

**ຂ່າວ : ພະແນກຮ່ວມມືອົງການການເງິນສາກົນ, ກົມຮ່ວມມືສາກົນ**

**ພາບ : ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ**

*ຢູ່ເມືອງລາວໃຊ້ເງິນກີບລາວ*